# ຄຳແນະນຳສຳລັບແຮງງານຕ່າງຊາດ ດ້ານສິດທິການສະມາຄົມ ແລະ ການຮ່ວມເຈລະຈາຕໍ່ລອງໃນປະເທດໄທ

IOM
UN MIGRATION

CREST FASHION

CREST
CORPORATE RESPONSIBILITY IN ELIMINATING SLAVERY AND TRAFFICKING

ເອກະສານສະບັບນີ້ໄດ້ຖືກຈັດພິມຂຶ້ນ ພາຍໃຕ້ຂອບເຂດໂຄງການຄວາມຮັບຜິດຊອບຂອງ *ອົງກອນຕໍ່ການລົບລ້າງ ການຄ້າມະນຸດ ແລະ ການຕົກເປັນທາດ* (CREST) ແລະ ໂຄງການ CREST Fashion



## ຂ້າພະເຈົ້າມີສິດທິເສລີພາບໃນການສະມາຄົມ ແລະ ການຮ່ວມເຈລະຈາຕໍ່ລອງໃນປະເທດໄທຫຼືບໍ່?

ແມ່ນແລ້ວ, ທ່ານມີສິດ! ແຮງງານເຄື່ອນຍ້າຍຈາກຕ່າງຊາດຖືກອະນຸຍາດໃຫ້ເຂົ້າເປັນສະມາຊິກ ແລະ ມີສ່ວນຮ່ວມໃນກິດຈະກຳຂອງສະຫະພາບແຮງງານຢູ່ປະເທດໄທ. ເຖິງແນວໃດກໍ່ຕາມ, ອີງຕາມກົດໝາຍຂອງໄທແລ້ວແມ່ນບໍ່ໄດ້ອະນຸຍາດໃຫ້ແຮງງານເຄື່ອນຍ້າຍຈາກຕ່າງຊາດກໍ່ຕັ້ງ ຫຼື ເປັນກຳມະການ ຫຼື ເປັນຜູ້ດຳລົງຕຳແໜ່ງໃນສະຫະພາບການຄ້າ ຫຼື ສະຫະພາບແຮງງານທີ່ຂຶ້ນທະບຽນໃນປະເທດໄທ ເຊິ່ງໝາຍຄວາມວ່າທ່ານຈະ:



- ມີອິດສະຫຼະພາບທີ່ຈະພົບປະ ແລະ ຕິດຕໍ່ພົວພັນກັບຕົວແທນສະຫະພາບແຮງງານຈາກສະຫະພາບແຮງງານ ແລະ/ຫຼື ອົງການຈັດຕັ້ງຂອງຜູ້ອອກແຮງງານໃນຈຸດສັງກັດວຽກຂອງຕົນ.



- ທ່ານມີອິດສະຫຼະທີ່ຈະເຂົ້າຮ່ວມປະຊຸມກັບສະຫະພາບແຮງງານໄດ້ ໂດຍບໍ່ຕ້ອງມີຝ່າຍຈັດການຂອງບໍລິສັດເຂົ້າຮ່ວມ.



- ທ່ານບໍ່ຄວນຈະໄດ້ຮັບການລົງໂທດ, ຖືກຂົ່ມຂູ່, ຫຼື ຖືກຄຸກຄາມຈາກນາຍຈ້າງຂອງທ່ານໃນການເຂົ້າຮ່ວມສະຫະພາບແຮງງານ, ການມີສ່ວນຮ່ວມກັບການເຄື່ອນໄຫວວຽກທີ່ເຊື່ອມໂຍງກັບສະຫະພາບແຮງງານ ຫຼື ອົງກອນຂອງຊາວຜູ້ອອກແຮງງານ ຫຼື ເພື່ອການເປັນຕົວແທນດ້ານຜົນປະໂຫຍດສ່ວນລວມຂອງຊາວຜູ້ອອກແຮງງານ.



- ທ່ານບໍ່ຄວນຖືກລົງໂທດຍ້ອນການເຂົ້າຮ່ວມການຄັດຄ້ານການຢຸດເຊົາການເຮັດວຽກ, ຫຼື ການປະທ້ວງຕາມກົດໝາຍ ແຫ່ງປະເທດໄທ.



- ສັນຍາແຮງງານຂອງທ່ານບໍ່ຄວນຈະໄດ້ຮັບການຍົກເລີກໃນກໍລະນີຫາກທ່ານໄດ້ເຂົ້າຮ່ວມກິດຈະກຳທີ່ກ່ຽວຂ້ອງກັບການຮ່ວມເຈລະຈາຕໍ່ລອງ, ສະຫະພາບແຮງງານ, ອົງການຈັດຕັ້ງຂອງຜູ້ອອກແຮງງານ.



- ນາຍຈ້າງຂອງທ່ານບໍ່ຄວນຈະຈັດຫາສິ່ງຈູງໃຈເພື່ອຢຸດທ່ານບໍ່ໃຫ້ເຂົ້າຮ່ວມ ຫຼື ມີສ່ວນຮ່ວມກັບສະຫະພາບແຮງງານ.

ຂໍ້ມູນທີ່ຄວນຮູ້

### ຄຳວ່າສະຫະພາບແຮງງານ ແລະ ອົງການຈັດຕັ້ງຂອງຜູ້ອອກແຮງງານແມ່ນຫຍັງ?

ຄຳວ່າສະຫະພາບແຮງງານ ແລະ ອົງການຈັດຕັ້ງຜູ້ອອກແຮງງານໄດ້ມີບົດບາດສຳຄັນໃນການຮ່ວມກັນເຈລະຈາ ລະຫວ່າງນາຍຈ້າງ ແລະ ຜູ້ອອກແຮງງານເພື່ອເຈລະຈາເງື່ອນໄຂການເຮັດວຽກ, ສະຫວັດດີການ, ຜົນປະໂຫຍດ, ແລະ ແກ້ໄຂຂໍ້ຂັດແຍ່ງດ້ານແຮງງານ ເພື່ອເຮັດໃຫ້ບ່ອນເຮັດວຽກມີຄວາມປອດໄພ ແລະ ມີປະສິດທິພາບ.

### ການເຈລະຈາຕໍ່ລອງຮ່ວມກັນແມ່ນຫຍັງ?

ແມ່ນຂະບວນການໜຶ່ງທີ່ຜູ້ອອກແຮງງານເຈລະຈາເງື່ອນໄຂການຈ້າງງານກັບນາຍຈ້າງໂດຍຜ່ານສະຫະພາບແຮງງານ ເຊັ່ນນະໂຍບາຍຄ່າຈ້າງ, ສະຫວັດດີການ, ຊົ່ວໂມງການເຮັດວຽກ, ການລາພັກ, ນະໂຍບາຍດ້ານສຸຂະພາບ ແລະ ຄວາມປອດໄພຂອງການເຮັດວຽກ ແລະ ອື່ນໆ.

ເອກະສານສະບັບນີ້ໄດ້ຮັບການສະໜັບສະໜູນໂດຍ IKEA Supply AG ແລະ

Laudes Foundation

Sweden Sverige

ໄອໂອເອັມ ປະເທດໄທ, ຊັ້ນ 18, ອາຄານຣັດຈະນາການ, ເລກທີ 3 ຖະໜົນສາທອນໃຕ້, ກຸງເທບ 10120, ປະເທດໄທ ໂທ (+65) 343 9300 66 (ສຳນັກງານໃຫຍ່) | ອີເມວ : crestthailand@ iom.int